- Cash assistance, SNAP (food support)
  ຊ່ວຍພາຂໍທາງດ້ານການເງິນ ແລະອາຫານ

- Energy assistance, Telephone assistance
  ຊ່ວຍຕິດຕໍ່ ແລະພົວພັນທາງດ້ານພລັງງານໄຟຟ້າ, ແລະໂທຣະສັບ
- Job search
  ຊ່ວຍຊອກຫາວຽກແລະງານທຳ

- Property tax preparation.
  ຊ່ວຍເຮັດພາສີ ທີ່ພັກພາອາສັຍປະຈຳປີ

- Finding resources for elders
  ຊ່ວຍຊອກຫາສວັດດີການເພື່ອຜູ້ສູງອາຍຸ

- Immigration application (Citizenship, re- entry permit, passport, replace or renew green card
  ຊ່ວຍປະກອບຄຳຮ້ອງເພື່ອການຕັດສັນຊາດ, ຕໍ່ໃບອະນຸມັດເຂົ້າເມືອງ, ເຮັດໜັງສືຜ່ານແດນ
- Interpretation and Translation
  ຊ່ວຍໃນການແປພາສາ

- Medical Assistance, Medicare, discount on medication
  ຊ່ວຍຂໍການຊ່ວຍເຫຼືອທາງດ້ານການແພດ

- Clinic, hospital, dental care, refill medication
  ຊ່ວຍນຳພາໄປໂຮງບານ, ກວດເຂົ້າ, ຕື່ມເຕັມຢຸກຢາ

- Setting up doctor appointments, arrange for transportation
  ຊ່ວຍນັດພົບໝໍ, ຊ່ວຍຈັດແຈງການຮັບສົ່ງ

- Public housing/re-certification or renewal, affordable apartment, foreclosure
  ຊ່ວຍຂໍ ຫຼືຍັ້ງຢືນຄືນໃໝ່ໃນທີພັກອາສັຍ

- Follow-up with,the basic need
  ຊ່ວຍຕິດຕາມກັບສິ່ງຈຳເປັນ ແກ່ການດຳລົງຊີວິດປະຈຳວັນ

## GROUP SERVICES
## ຊ່ວຍແບບເປັນໝູ່ຄະນະ

Participants are engaged in health education seminars monthly through networks with health related organizations, a monthly health education seminar is provided on a topic of interest to elders.ໃນແຕ່ລະເດືອນ, ຜູ້ທີ່ເຂົ້າຮ່ວມ ຫຼືມາປະກອບສ່ວນໃນການສຳມະນາຮໍາຮຽນ ແລະສຶກສາໃຫ້ເຂົ້າໃຈເຖິງຂໍ້ມູນຕ່າງໆທີ່ມີຜົນປໂຍດໂດຍຜ່ານເຄືອຂ່າຍຕາໜ່າງການເຮັດວຽກຂອງໜ່ວຍງານທີ່ກ່ຽວຂ້ອງ. ການສຳມະນາດັ່ງກ່າວ ຈະໃຫ້ຫົວຂໍ້ທີ່ເປັນໜ້າສົນໃຈ ແລະສອດຄ່ອງກັບຊີວິດປະຈຳວັນຂອງຜູ້ສູງອາຍຸ.

The Lao Cultural Center provides a welcoming and safe place for elders, age 60 and over to gather. Opportunities to socialize, talk, reconnect and have fun together. Participants also have a change to develop new friendship and support from other elder members. This program is also a great opportunity to participate in social and recreational activities at the LAOA or other places, group setting for the purpose of emotional support that will enhance personal independence.

ສູນວັທນະທັມລາວ ເປັນສຖານທີ່ທີ່ເໝາະສົມ ແລະມີຄວາມປອດພັຍດີສຳລັບການມາເຕົ້າໂຮມຂອງບັນດາຜູ້ສູງອາຍຸທັງຫຼາຍ. ໂຄງການດັ່ງກ່າວໄດ້ສ້າງໂອກາດໃຫ້ແກ່ຜູ້ສູງອາຍຸ ໄດ້ເຂົ້າຮ່ວມກັບສັງຄົມ, ໄດ້ສົນທະນາ ແລະແລກປ່ຽນຄວາມຄິດຄວາມເຫັນນຳຜູ້ອື່ນ. ຈາກຄວາມໂດດດ່ຽວ ແລະອ້າງຫວ່າງ ສາມາດມີສາຍສັມພັນອັນດີ ແລະມີໝູ່ເພື່ອນທີ່ຮັກແພງ ແລະສາມາດຊ່ວຍເຫຼືອຊຶ່ງກັນ ແລະກັນເພີ່ມຂຶ້ນຢ່າງມີອິສຣະ. ນອກຈາກຜົນປະໂຍດທີ່ໄດ້ຮັບດັ່ງກ່າວ, ລາວ-ອາເມຣິກາຍັງໄດ້ສນອງໃຫ້ຜູ້ສູງອາຍຸໄດ້ມີກິຈກັມຕ່າງໆເປັນຕົ້ນການເຮັດສວນຜັກ, ການຟ້ອນລຳ, ການເລົ່າເລື້ອງສູ່ກັນຟັງ, ການປະກອບສ່ວນທາງດ້ານສິລປະ ແລະວັທນະທັມລາວ ການຮຽນຮູ້ການຕັດສັນຊາດ, ການນຳໃຊ້ຄອມພິວເຕີຣ໌, ການຕິວົງສົນທະນາແກ້ໄຂບັນຫາຕ່າງໆໃຫ້ກັນແລະກັນ







## SPONSORS

TRELLIS Area Agency on Aging

Stevens Square Foundation — Dignity, Independence, Quality of Life

Volunteers of America® MINNESOTA

Lao Seniors Quality of Life

## DONATION
## ການບໍຣິຈາກ

LAOA builds upon the strengths and traditions of Lao culture to give Lao families the tools needed to succeed in their new homeland. We are a nonprofit organization, donation can be made in the following form: ລາວ-ເອໄດ້ຖືກສ້າງຕັ້ງຂຶ້ນບົນຮາກຖານຂອງປະເພນີ-ວັທນະທັມອັນດີງາມ ຊອກຫາເງື່ອນໄຂແລະປັດຈັຍທຕ່າງໆທີ່ຈຳເປັນ ໃຫ້ແກ່ຊຸມຊົນຊາວລາວໄດ້ປະສົບຜົນສຳເຣັດໃນຜືນແຜ່ນດິນອັນໃໝ່ນີ້. ພວັກເຮົາເປັນອົງການຈັດຕັ້ງທີ່ບໍ່ສແວງຫາຜົນກຳໄຣ. ຖ້າຫາກທ່ານຢາກຈະປະກອບສ່ວນສົມທົບທຶນໃນໂຄງການດັ່ງກ່າວ ທ່ານສາມາດບໍຣິຈາກໄດ້ ຕາມຮູບແບບທີ່ບົ່ງໃວ້ຂ້າງລຸ່ມນີ້.

| | | |
|---|---|---|
| $5 | $10 | $15 |
| $20 | Other $ | |

Type of payment: cash or check (if check please make payable to Lao Advancement Organization of America)

☐ Program Supplies: ບໍຣິຈາກເປັນວັດຖຸສິ່ງຂອງ

☐ Volunteer: ບໍຣິຈາກເຫື່ອແຮງສຕິປັນຍາ

☐ Other: ໃນຮູບແບບອື່ນ ____________

For more information, please call LAOA or visit us at www.laoamerica.org

Check out the back of the brochure for other contact information.

## SPECIAL ACCESS DONATION

Services are Free but Voluntary Contributions Accepted

ບໍຣິການທ່ານຟຣີ  ແຕ່ມີຄວາມຍິນດີຮັບ



The true cost of a one-time assistance for individual Special Access Program is $139.74. LAOA will ask the senior to pay a percentage of that cost based on the sliding scale fee system listed below

| Special Access | | | |
|---|---|---|---|
| % of 2024 Federal Poverty Guidelines | Monthly Income 1 person 60+years | Individual Cost-share as Percentage of the service Unit Price | Individual's Cost-share Amount |
| 100% or less | >$1,255 | 0% | Voluntary Contribution |
| 101% to 150% | $1256 - $1,883 | 25% | $34.94 |
| 151% to 200% | $1,884 - $2,510 | 50% | $69.87 |
| <201% | <$2,510 | 100% | $139.74 |

Please note on one will be denied service due to inability to pay. ບໍ່ມີໃຜຈະຖືກປະຕິເສດໃນການໃຊ້ບໍຣິການຍ້ອນວ່າບໍ່ມີປັດໃຈໃນການບໍຣິຈາກ.

For more information, please call
ຢາກຊາບລາຍລະອຽດເພີ້ມເຕີມ,  ກະຣຸນາໂທ

# CONTACT & INFORMATION




2648 W Broadway Ave
Minneapolis, MN 55411

www.facebook.com/lao.america

laoamerica

CALL LAOA : (612) 767 - 1684

EMAIL : laoa@laoamerica.org

OFFICE HOURS  M-F 8:30AM - 4:30PM

VER. 2024

For program information or to enroll, please visit:
**laoamerica.org**

# SPECIAL ACCESS PROGRAM

60+



LAOAMERICA

Lao elders are isolated in their homes for a number of reasons. Mental health issues can make it difficult for them to make good decisions related to their health and wellbeing. A lack of transportation, resource and limited English skills, make it difficult to get around, which contribute to isolation.

Special Access Project is to help Lao and Hmong elders age 60+ receive service

ຜູ້ສູງອາຍຸລາວທັງຫຼາຍມັກຈະຢູ່ຢ່າງໂດດດ່ຽວດ້ວຍເງື່ອນໃຂແລະເຫດຜົນຫຼາຍຢ່າງທີ່ແຕກຕ່າງກັນ.  ອັນທີ່ເປັນຕົ້ນຕໍແລະເປັນພື້ນຖານ  ແມ່ນບັນຫາສຸຂພາບທາງດ້ານຈິດໃຈ  ແລະແນວຄິດຕ່າງໆເຂົາເຈົ້າທີ່ເປັນປັດໃຈກໍ່ໃຫ້ເກີດຄວາມສັບສົນໃນການຕັດສິນໃຈໃຫ້ຖືກຕ້ອງແລະເໝາະສົມກ່ຽວກັບການດຳລົງຊີວິດໃນບັ້ນປາຍ.  ຂາດການຂົນສົ່ງໂດຍສານ,ດ້ານພາສາອັງກິດຖືກຈຳກັດ  ແລະສິ່ງອື່ນໆໄດ້ໃນບໍຣິເວນອ້ອມຮອບ.  ໂຄງການນີ້ໄດ້ຊ່ວຍເຮັດໃຫ້ຜູ້ສູງອາຍຸລາວລຸ່ມ  ແລະລາວມົ້ງ  ທີ່ມີອາຍຸ  60ປີຂື້ນໄປໄດ້ຮັບການບໍຣິການດັ່ງນີ້.

## INDIVIDUAL SERVICES
## ຊ່ວຍໃຫ້ເຂົ້າເຖິງສວັດດີການເປັນສ່ວນບຸກຄົນ

- Assist with filing government forms
  ຊ່ວຍຕື່ມເຕັມຂໍ້ມູນໃສ່ໃນຮ່າງເອກກະສານຂອງຣັຖບານ
- Unemployment benefit assistance
  ຊ່ວຍຂໍເງິນຫວ່າງງານ
- Supplemental Security Income (SSI)
  ຊ່ວຍຂໍເງິນສົງເຄາະ
- Retirement Survivors Disability Insurance (RSDI)
  ຊ່ວຍຂໍເງິນເບັ້ຽບຳນານປະກັນພັຍຄວາມພິການ
- Retirement benefit
  ຊ່ວຍຂໍສວັດດີການເບັ້ຽບຳນານ